ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ.
ກົມຂົນສົ່ງ

ເລກທີ 907/ກຂສ.
ວັນທີ 08 OCT 2002

# ບົດແນະນໍາ

## ກ່ຽວກັບ ລະບຽບການສອບເສັງໃບຂັບຂີ່

( ເອກະສານຊ້ອນທ້າຍ ເລກ III ຂອງຂໍ້ກໍານົດກ່ຽວກັບລະບຽບການໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ເລກທີ 3416/ຄຂປກ, ວັນທີ 04/09/2002 )

★ ການສອບເສັງໃບຂັບຂີ່ ຂອງພົນລະເຮືອນລາວ ແບ່ງອອກເປັນສອງພາກ ຄື :

I. ການສອບເສັງພາກທິດສະດີ ລວມມີ 6 ວິຊາ ຄື:

ວິຊາທີ 1 ຄູນສົມບັດນັກຂັບຂີ່ ( ການສໍາມະນາລວມໝູ່ກ່ອນຈະເຂົ້າສອບເສັງວິຊາພື້ນຖານ ປະມານໜຶ່ງຊົ່ວໂມງ ຂອງຕອນເຊົ້າ )

- ນັກຂັບຂີ່ທຸກຄົນຈະຕ້ອງເຂົ້າຮັບຟັງການເຜີຍແຜ່ ກົດລະບຽບການສອບເສັງ ແລະ ກົດລະບຽບຈະລາຈອນ ຕາມກໍານົດເວລາທີ່ທາງຄະນະກໍາມະການສອບເສັງໄດ້ກໍານົດໄວ້ ຜູ້ທີ່ບໍ່ໄດ້ເຂົ້າຮ່ວມຮັບຟັງການເຜີຍແຜ່ດັ່ງກ່າວ ຈະບໍ່ມີສິດເຂົ້າສອບເສັງວິຊາອື່ນໆ

ວິຊາທີ 2 ກົດລະບຽບຈະລາຈອນ

- ສອບເສັງປະເພດລົດຈັກ, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດຕຶກອກ ມີ 5 ຄໍາຖາມ,
- ສອບເສັງປະເພດລົດສາມລໍ້ຕິດເຄື່ອງຈັກ ແລະ ລົດເບົາ ມີ 7 ຄໍາຖາມ.
- ສອບເສັງປະເພດລົດຂົນສົ່ງສິນຄ້າ-ໂດຍສານ ມີ 10 ຄໍາຖາມ.

ວິຊາທີ 3 ປ້າຍສັນຍານ ແລະ ເຄື່ອງໝາຍການຈະລາຈອນ

- ສອບເສັງປະເພດລົດຈັກ, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດຕຶກອກ ມີ 5 ຄໍາຖາມ ( 5 ປ້າຍ ).
- ສອບເສັງປະເພດລົດສາມລໍ້ຕິດເຄື່ອງຈັກ ແລະ ລົດເບົາ ມີ 7 ຄໍາຖາມ ( 7 ປ້າຍ ).
- ສອບເສັງປະເພດລົດຂົນສົ່ງສິນຄ້າ-ໂດຍສານ ມີ 10 ຄໍາຖາມ ( 10 ປ້າຍ )

ວິຊາທີ 4 ສິດທິໃນການເດີນລົດ ( ສາລະບານການເດີນລົດ ).

- ສອບເສັງປະເພດລົດຈັກ, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດຕຶກອກ ມີ 3 ຄໍາຖາມ.
- ສອບເສັງປະເພດລົດສາມລໍ້ຕິດເຄື່ອງຈັກ ຂຶ້ນເມືອ ມີ 5 ຄໍາຖາມ.

ວິຊາທີ 5 ຄວາມຮູ້ກ່ຽວກັບເຕັກນິກລົດ

- ສອບເສັງປະເພດລົດສາມລໍ້ຕິດເຄື່ອງຈັກ ແລະ ລົດເບົາ ມີ 5 ຄໍາຖາມ.
- ສອບເສັງປະເພດລົດຂົນສົ່ງສິນຄ້າ-ໂດຍສານ ມີ 7 ຄໍາຖາມ.

ວິຊາທີ 6 ຄວາມຮູ້ກ່ຽວກັບເຕັກນິກການຂັບຂີ່

- ສອບເສັງປະເພດລົດຈັກ, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດຕຶກອກ ມີ 3 ຄໍາຖາມ
- ສອບເສັງປະເພດລົດສາມລໍ້ຕິດເຄື່ອງຈັກ ແລະ ລົດເບົາ ມີ 5 ຄໍາຖາມ
- ສອບເສັງປະເພດລົດຂົນສົ່ງສິນຄ້າ-ໂດຍສານ ມີ 7 ຄໍາຖາມ

❋ ຫລັກການຕັດສິນ ເສັງໄດ້ ຫລືເສັງຕົກ:

- ຖາມ 3 ຄໍາຖາມ ຕອບຖືກ 2 ຖືວ່າສອບຜ່ານ
- ຖາມ 5 ຄໍາຖາມ ຕອບຖືກ 4 ຖືວ່າສອບຜ່ານ
- ຖາມ 7 ຄໍາຖາມ ຕອບຖືກ 6 ຖືວ່າສອບຜ່ານ
- ຖາມ 10 ຄໍາຖາມ ຕອບຖືກ 8 ຖືວ່າສອບຜ່ານ

ກໍລະນີ ອະນຸໂລມ :

- ກໍລະນີຖາມ 3 ຄໍາຖາມ ຕອບຖືກ 1, ຫລືຖາມ 5 ຄໍາຖາມຕອບຖືກ 3 , ຫລື ຖາມ 7 ຄໍາຖາມ ຕອບຖືກ 5, ຫລື ຖາມ 10 ຄໍາຖາມ ຕອບຖືກ 7, ໃຫ້ ກໍາມະການ ຖາມຕື່ມອີກ 1 ຄໍາຖາມ ຖ້າຕອບຖືກ ກໍ່ຖືວ່າຜ່ານໄດ້, ນອກຈາກກໍລະນີດັ່ງ ກ່າວມາຂ້າງເທິງນີ້ແລ້ວ ຖືວ່າສອບຕົກ.

❋ ການສອບເສັງຄືນພາກທິດສະດີ :

- ຖ້າຜູ້ສອບເສັງບໍ່ຜ່ານວິຊາໃດໜຶ່ງໃນພາກທິດສະດີ ຜູ້ສອບເສັງຕ້ອງແຈ້ງຈຸດປະສົງຂໍສອບເສັງຄືນຕໍ່ພະນັກງານຮັບຄໍາຮ້ອງ ຫລື ໜ່ວຍເລຂາ ແລະ ຈ່າຍຄ່າບໍລິການເພີ່ມ ຫລັງຈາກນັ້ນຈຶ່ງຈະໄດ້ຮັບບັດອະນຸຍາດໃຫ້ເສັງຄືນສະເພາະວິຊາທີ່ເສັງຕົກນັ້ນ ໃນຄັ້ງຕໍ່ໄປ.
- ຖ້າຜູ້ສອບເສັງບໍ່ຜ່ານໃນຄັ້ງທີ່ສອງ ໃຫ້ພັກການສອບເສັງໄວ້ 3 ເດືອນ ແລ້ວຈຶ່ງມາສອບເສັງໃໝ່.
- ຖ້າຜູ້ສອບເສັງບໍ່ຜ່ານໃນຄັ້ງທີ່ສາມ ໃຫ້ພັກການສອບເສັງໄວ້ໜຶ່ງປີ ແລະ ຕ້ອງໄດ້ໄປຜ່ານການຝຶກອົບຮົມອີກເທື່ອໜຶ່ງແລ້ວ ຈຶ່ງປະກອບເອກະສານຂໍສອບເສັງໃໝ່ ໂດຍໃຫ້ເສັງຄືນໃໝ່ໝົດທຸກວິຊາ.

ໝາຍເຫດ : ຖ້າຜູ້ໃດເສັງຕົກວິຊາໃດໜຶ່ງຂອງພາກທິດສະດີ ຈະບໍ່ມີສິດເຂົ້າສອບເສັງພາກປະຕິບັດຕົວຈິງ.

❋ ການຍົກເວັ້ນສອບເສັງພາກທິດສະດີ ແລະ ຍົກເວັ້ນການສອບເສັງປະເພດລົດເບົາ :

- ຜູ້ສອບເສັງເອົາໃບຂັບຂີ່ປະເພດລົດຈັກ, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ຕົວກງ ຈະໄດ້ຮັບການຍົກເວັ້ນການສອບເສັງ ພາກທິດສະດີໃນກໍລະນີມີໃບຂັບຂີ່ປະເພດອື່ນ ມາກ່ອນແລ້ວ.
- ຜູ້ທີ່ມີໃບຂັບຂີ່ປະເພດລົດຂົນສົ່ງສິນຄ້າ ມາກ່ອນແລ້ວ ຫລື ຜູ້ທີ່ສອບເສັງຜ່ານການສອບເສັງປະເພດລົດຂົນສົ່ງສິນຄ້າໄດ້ ແລ້ວ (ສະເພາະຜູ້ທີ່ໄດ້ຜ່ານການຝຶກອົບຮົມຈາກໂຮງຮຽນສອນຂັບລົດ ເທົ່ານັ້ນ ) ສາມາດຂໍໃບຂັບຂີ່ປະເພດລົດເບົາໄດ້ ໂດຍບໍ່ຈໍາເປັນຕ້ອງສອບເສັງອີກ ແຕ່ຕ້ອງໄດ້ຈ່າຍຄ່າ ທໍານຽມ ແລະ ບໍລິການໃຫ້ຄົບຖ້ວນທັງສອງປະເພດ.
- ນອກຈາກກໍລະນີທີ່ກ່າວມາຂ້າງເທິງນີ້ ຈະຕ້ອງໄດ້ສອບເສັງພາກທິດສະດີ ແລະ ປະຕິບັດ ຕາມລະບຽບການ.

## II. ການສອບເສັງພາກປະຕິບັດຕົວຈິງ :

ການສອບເສັງພາກປະຕິບັດຕົວຈິງ ປະກອບມີສອງວິຊາຄື :

ວິຊາທີ 1 : ການຂັບຂີ່ຕາມເສັ້ນທາງ.

- ຜູ້ຂັບຂີ່ລົດຕ້ອງຂັບລົດໄປຕາມເສັ້ນທາງທີ່ຄະນະກໍາມະການກໍານົດໄວ້, ສໍາລັບຜູ້ຂັບຂີ່ລົດປະເພດສາມລໍ້ຕິດ ເຄື່ອງຈັກຂຶ້ນເມືອຕ້ອງມີກໍາມະການນັ່ງໄປນໍາເພື່ອຕິດຕາມ ແລະ ໃຫ້ເອົາໃຈໃສ່ 8 ຂໍ້ ຄື : ຈາກທາງນ້ອຍເຂົ້າສູ່ ທາງໃຫຍ່, ລ້ຽວຊ້າຍ ຫລືລ້ຽວຂວາຕາມທາງແຍກ, ທ່າທີໃນການຂັບລົດ, ການອອກລົດ, ການຈອດລົດ, ການຂໍຂຶ້ນ ຂຶ້ນໜ້າ, ເວລາສອບເສັງ ບໍ່ໃຫ້ຈັກມອດ. ກໍລະນີນັກສອບເສັງຫາກເຮັດຜິດ ເກີນສອງຂໍ້ ຫລື ເຮັດ ຈັກລົດມອດ ຖືວ່າ ເສັງຕົກ ແລະ ຈະອະນຸຍາດໃຫ້ເສັງຄືນໄດ້ໃນຄັ້ງຕໍ່ໄປ.
- ສໍາລັບການສອບເສັງປະເພດລົດຈັກ ໃຫ້ຂີ່ ລົດໄປຕາມເສັ້ນທາງທີ່ຄະນະກໍາມະການໄດ້ກໍານົດໄວ້ ໂດຍການ ວາງກໍາມະການໄວ້ເປັນຈຸດ ແລະ ນັກສອບເສັງກໍ່ຕ້ອງໄດ້ໃສ່ເສື້ອນໍ້າເບີ ທີ່ໜ່ວຍເລຂາຢາຍໃຫ້ ເພື່ອຄວາມສະດວກ

ແກ່ກຳມະການໃນການຕິດຕາມ.

<u>ວິຊາທີ່ 2</u> <u>ການສອບເສັງຢູ່ກັບທີ່</u> :

1. <u>ສອບເສັງລົດຈັກ ( A )</u> ເບິ່ງຕາມຮູບທີ່ 1

   ວິທີສອບເສັງ :

   - ໃຫ້ຜູ້ຂັບຂີ່ຂັບລົດເຂົ້າໃນເດີ່ນສອບເສັງ ໂດຍແລ່ນອ້ອມເປັນຮູບເລກ 0 (ສູນໃຫຍ່) ສອງຮອບ, ເປັນຮູບເລກແປດ (8) ສອງຮອບ ແລະ ຮູບເລກ ສູນ (0) ນ້ອຍ ໜຶ່ງຮອບແລ້ວອອກເລີຍ.
   - ຂໍ້ຄວນເອົາໃຈໃສ່ : ການປະຕິບັດຕ້ອງໃຫ້ຕໍ່ເນື່ອງກັນ.
   - ເວລາສອບເສັງ ຫ້າມ : ເອົາຕີນລົງແຕະພື້ນ, ຢຽບເສັ້ນ,ຢຽບ ຫລືຂ້າມເຄື່ອງໝາຍທີ່ວາງໄວ້, ເຮັດຈັກລົດມອດ ຢູ່ໃນຮູບ.

2. <u>ສອບເສັງປະເພດ A1 ລົດສາມລໍ້ຕິດເຄື່ອງຈັກ</u> (ຈຳໂບ່ -ຕຸ໊ກໆ ) ເບິ່ງຕາມຮູບທີ່ 2 ແລະ 3

   <u>ຮູບທີ່ 2 ເຂົ້າວົງວຽນ</u> :

   - ວິທີສອບເສັງ : ຜູ້ສອບເສັງຕ້ອງຂັບລົດເຂົ້າຮູບດັ່ງກ່າວ, ແລ່ນອ້ອມໄປທາງເບື້ອງຂວາ ຕາມທິດເຂັມໂມງໜຶ່ງ ຮອບ ແລ້ວອອກ ແລະ ກັບເຂົ້າອີກເທື່ອໜຶ່ງໂດຍແລ່ນອ້ອມໄປທາງດ້ານຊ້າຍທວນເຂັມໂມງ ໜຶ່ງຮອບ.

   <u>ຮູບທີ່ 3 ງູລອຍ</u> :

   - ວິທີສອບເສັງ : ຜູ້ຂັບຂີ່ຕ້ອງຂັບລົດ ແບບງູລອຍນໍ້າ ຫລືແບບຊິກແຊັກ ໂດຍເຂົ້າທາງປ່ອງດ້ານຂວາ ຈາກສົ້ນໜຶ່ງ ໄປຈົນ ສຸດ ແລ້ວອອກ ແລະ ກັບເຂົ້າຄືນອີກ ຕາມຮູບຈົນສຸດແລ້ວອອກທາງປ່ອງດ້ານຊ້າຍເລີຍ .
   - ເວລາສອບເສັງຫ້າມ : ຢຽບຫລັກ, ໂຄນຫລັກ, ຕຳຫລັກ ແລະ ເຮັດຈັກລົດມອດຢູ່ໃນຮູບ.

3. <u>ສອບເສັງປະເພດລົດເບົາ</u> ( B ) ເບິ່ງຕາມຮູບທີ່ 4 ແລະ 5 ລົດທີ່ໃຊ້ສອບເສັງຕ້ອງແມ່ນລົດທີ່ມີເຄື່ອງຈັກ 4 ສູບ ແລະ ມີ ບໍລິມາດຈັກ ແຕ່ 1.000 ຊີຊີ ຂຶ້ນເມືອ.

   <u>ຮູບທີ່ 4 ໂຕແຊ</u> ( C ):

   - ວິທີສອບເສັງ : ຜູ້ຂັບຂີ່ຕ້ອງຂັບລົດຖອຍຫລັງເຂົ້າຮູບ ໂດຍເອົາເບື້ອງກົງກັນຂ້າມກັບພວງມະໄລເຂົ້າ ເພື່ອໃຫ້ ຕີນລົດ ເບື້ອງກົງກັນຂ້າມຢຽບສາຍເຊືອກເສັ້ນໃນ. ຜູ້ສອບເສັງສາມາດຂັບລົດໄປໜ້າ ແລະ ຖອຍຫລັງຢູ່ໃນຮູບ ໄດ້ ບໍ່ເກີນແນວລະສາມເທື່ອ ເມື່ອໃດຫາກແນ່ໃຈວ່າຕີນລົດຂອງຕົນຢຽບ ເສັ້ນໃນຂອງຮູບ ແລ້ວ ໃຫ້ສັນ ຍານບອກກຳມະການ.
   - ເວລາສອບເສັງຫ້າມ : ຢຽບເສັ້ນນອກ, ຕຳຫລັກ ແລະ ເຮັດຈັກລົດມອດ ນັບທັງເວລາອອກ.

   <u>ຮູບທີ່ 5 ໂຕເຕ</u> ( T ):

   - ວິທີສອບເສັງ : ຂັບລົດເຂົ້າໄປ ເມື່ອເຖິງບ່ອນແຍກໃຫ້ລ້ຽວຊ້າຍ ໄປຈົນສຸດຮູບ ແລ້ວຖອຍຫລັງ ແລະ ລ້ຽວໄປທາງຂວາ ຈົນສຸດຮູບ. ແລ່ນເຂົ້າຄືນ ແລະລ້ຽວຂວາ ຈົນສຸດ ແລ້ວຖອຍຫລັງ ລ້ຽວຊ້າຍກັບຄືນໄປທາງຈຸດເລີ່ມຕົ້ນ ຕັ້ງລົດໃຫ້ທ່ຽງ ແລ້ວແລ່ນຊື່ ອອກເລີຍ.
   - ເວລາສອບເສັງ ຫ້າມ : ດາດຫລັກ, ຕຳຫລັກ, ເຮັດຈັກລົດມອດ ແລະ ປ່ຽນເກັຍຢູ່ໃນຮູບ.

4. <u>ສອບເສັງປະເພດລົດບັນທຸກສິນຄ້າ</u> ( C ) ເບິ່ງຕາມຮູບ 6 ແລະ 7 ພາຫານະສອບເສັງຕ້ອງແມ່ນປະເພດລົດບັນທຸກ ທີ່ມີ ຂະໜາດບັນທຸກ ແຕ່ 3,5 ໂຕນ ຂຶ້ນເມືອ.

   - ວິທີສອບເສັງ : ໃຫ້ປະຕິບັດຕາມຂັ້ນຕອນ ທີ່ກຳນົດໄວ້ສຳລັບການສອບເສັງປະເພດລົດເບົາ.

- ຂໍ້ຫ້າມໃນເວລາສອບເສັງ : ປະຕິບັດຄືກັນກັບທີ່ກໍານົດໄວ້ສໍາລັບການສອບເສັງລົດເບົາ.

5. <u>ສອບເສັງປະເພດລົດ ໂດຍສານ ( D )</u> ເບິ່ງຕາມຮູບທີ່ 8., ພາຫານະສອບເສັງຕ້ອງແມ່ນປະເພດລົດບັນທຸກ ທີ່ມີຂະໜາດບັນທຸກ ແຕ່ 3,5 ໂຕນ ຂຶ້ນເມືອ ຫລື ລົດບັສຂະໜາດ 25 ບ່ອນນັ່ງຂຶ້ນເມືອ.

<u>ຮູບທີ່ 8 ຄອກໝູ</u>

- ວິທີສອບເສັງ : ໃຫ້ແລ່ນລົດເຂົ້າໃນຮູບ ແລະ ອວ່າຍລົດຢູ່ໃນຮູບ ທີ່ກໍານົດໄວ້ ອະນຸຍາດໃຫ້ປ່ຽນເກັຍໄດ້ບໍ່ເກີນ 6 ຄັ້ງ ໝາຍຄວາມວ່າ ໄປໜ້າ ໄດ້ 3 ແລະ ຖອຍຫລັງ 3 ເພື່ອໃຫ້ລົດອວ່າຍໜ້າກັບຄືນ ແລ້ວຖອຍ ຫລັງເຂົ້າ ນັ່ງຽນໃນຄອກທີ່ກໍານົດໄວ້ຢູ່ເບື້ອງກົງກັນຂ້າມ ກັບເບື້ອງທີ່ເຂົ້າມາ.
- ເວລາສອບເສັງ ຫ້າມ : ຕໍາຫລັກ, ດາດຫລັກ, ຢຽບເຊືອກ, ເຮັດຈັກລົດມອດ ແລະ ຫ້າມຫລຽວຫລັງ, ໃຫ້ເບິ່ງແວ່ນຂ້າງເທົ່ານັ້ນ.

6. <u>ສອບເສັງປະເພດລົດໄຖນາເດີນຕາມ-ລົດຕົ໊ອກງ</u> (A2) :

<u>ສະຖານທີ່ສອບເສັງ</u> : ໃຫ້ກໍານົດເອົາເສັ້ນທາງບ່ອນໃດໜຶ່ງທີ່ໄກຈາກທາງຫລວງ.

- ວິທີສອບເສັງ : ໃຫ້ຜູ້ສອບເສັງຂັບລົດໄປຕາມເສັ້ນທາງ ແລະ ໃຫ້ກໍາມະການຕິດຕາມເບິ່ງຈັງຫວະການ ຫັກລ້ຽວຊ້າຍ- ລ້ຽວຂວາ, ອອກຈາກທາງນ້ອຍເຂົ້າສູ່ທາງໃຫຍ່ ຕ້ອງຢຸດລົດສັງເກດເບິ່ງທາງກ້ຳຊ້າຍ - ຂວາ ແລ້ວຈຶ່ງຂັບລົດເຂົ້າສູ່ທາງໃຫຍ່, ອອກຈາກທາງໃຫຍ່ສູ່ທາງນ້ອຍ, ໂດຍສະເພາະເວລາລ້ຽວຊ້າຍ ຕ້ອງແອບລົດເຂົ້າແຄມທາງ ສັງເກດເບິ່ງທາງດ້ານໜ້າ ແລະ ຫລັງ ເມື່ອປອດໄພແລ້ວຈຶ່ງລ້ຽວລົດອອກໄປເປັນຈັງຫວະດຽວ. ຖ້າປະຕິບັດໄດ້ຢ່າງຖືກຕ້ອງ ແລະ ດ້ວຍຄວາມຄ່ອງແຄ້ວ ຖືວ່າສອບຜ່ານ.

* <u>ການຕັດສິນຜົນການສອບເສັງ ໄດ້ ຫລື ຕົກ</u> :

-ຫາກຜູ້ຂັບຂີ່ປະຕິບັດໄດ້ຕາມການກໍານົດຂອງແຕ່ລະຮູບຖືວ່າສອບຜ່ານ;

-ຜູ້ຂັບຂີ່ມີສິດສອບເສັງແຕ່ລະຮູບໄດ້ ສອງຄັ້ງ ໂດຍບໍ່ມີການທົດລອງ, ກໍລະນີເຂົ້າເທື່ອທີ່ໜຶ່ງສາມາດຜ່ານໄດ້ ຖືວ່າສອບຜ່ານເລີຍ, ແຕ່ຖ້າຫາກບໍ່ຜ່ານໃນເທື່ອທໍາອິດ ຈະໄດ້ຮັບອະນຸຍາດໃຫ້ເຂົ້າອີກເປັນເທື່ອທີ່ສອງຖ້າປະຕິບັດໄດ້ຕາມການກໍານົດຖືວ່າສອບຜ່ານ, ກົງກັນຂ້າມ ຖ້າບໍ່ສາມາດຜ່ານໄດ້ທັງສອງເທື່ອ ຖືວ່າສອບຕົກໃນຮູບນັ້ນ ແຕ່ຈະມີສິດສອບເສັງຮູບທີ່ ເຫລືອຕໍ່ໄປ.

<u>ໝາຍເຫດ</u> : ຖ້າຜູ້ຂັບຂີ່ຄົນໃດຫາກຖືກຄະນະກໍາມະການສອບເສັງຈັບໄດ້ວ່າໄດ້ອາໄສການໃຫ້ສິນບານຂອງຜູ້ອື່ນ ໃນເວລາສອບເສັງຢູ່ນັ້ນ, ເຖິງແມ່ນຈະເສັງໄດ້ກໍ່ ຕາມຈະຖືວ່າສອບຕົກ ແລະ ສໍາລັບຜູ້ທີ່ໃຫ້ສິນບານແກ່ຄົນອື່ນນັ້ນ ຖ້າແມ່ນຜູ້ສອບເສັງເຊັ່ນກັນຈະຖືວ່າຂາດຄຸນສົມບັດ ຖ້າຫາກຜູ້ກ່ຽວໄດ້ສອບເສັງຜ່ານມາໄດ້ທຸກວິຊາແລ້ວ ກໍ່ຈະຖືກໝາຍໃຫ້ຕົກຢູ່ໃນຫ້ອງຄຸນສົມບັດ ຂອງໃບໃຫ້ຄະແນນ ແລ້ວແຈ້ງໃຫ້ຜູ້ກ່ຽວມາສອບເສັງໃໝ່ໃນມື້ຕໍ່ໄປໂດຍໃຫ້ເຂົ້າຮັບຟັງການສໍາມະນາ. ຫລັງຈາກນັ້ນໃຫ້ກໍາມະການກ່າວຕັກເຕືອນ ແລ້ວຈຶ່ງເຊັນຜ່ານຄຸນສົມບັດໃຫ້.

* <u>ການອະນຸຍາດໃຫ້ສອບເສັງຄືນ</u> :

- ຜູ້ສອບເສັງທີ່ສອບຕົກພາກປະຕິບັດຕົວຈິງ ຈະຕ້ອງນໍາເອົາບັດນັດມື້ເສັງມາຍື່ນຕໍ່ພະນັກງານຮັບຄໍາຮ້ອງຫລື ໜ່ວຍເລຂາເພື່ອຂໍອະນຸຍາດສອບເສັງຄືນ ໃນຄັ້ງຕໍ່ໄປ ໃນເງື່ອນໄຂທີ່ຜູ້ກ່ຽວຕ້ອງໄດ້ຈ່າຍເງິນຕື່ມ 50 % ຂອງຄ່າບໍລິການ ແລ້ວຈະໄດ້ຮັບບັດເຂົ້າສອບເສັງໃນຄັ້ງຕໍ່ໄປສະເພາະ ຮູບທີ່ສອບເສັງຕົກນັ້ນ. ຖ້າ ຫາກບໍ່ສາມາດສອບຜ່ານ ອີກ ໃນເທື່ອທີ່ສອງ

ນີ້ ໃຫ້ຜູ້ ກ່ຽວພັກການສອບເສັງໄວ້ ສາມເດືອນ ແລ້ວຈຶ່ງໃຫ້ສອບເສັງຄືນໃນຮູບທີ່ສອບເສັງຕົກນັ້ນອີກ ໂດຍຈ່າຍຄ່າບໍລິການຕື່ມ 100 %, ຖ້າຫາກຍັງບໍ່ຜ່ານອີກ ຖືວ່າໝົດສິດໃນການສອບເສັງຄືນ. ຖ້າຢາກສອບ ເສັງອີກຕ້ອງໄດ້ລໍຖ້າອີກ ຫົກເດືອນ ແລະ ໄປຜ່ານການຝຶກອົບຮົມອີກ ແລ້ວປະກອບຄຳຮ້ອງຂໍສອບເສັງ ແລະ ທຳການສອບເສັງຄືນນັບແຕ່ພາກທິດສະດີ ແລະ ພາກປະຕິບັດຕົວຈິງຕາມລຳດັບ.

※ <u>ກໍລະນີຍົກເວັ້ນການສອບເສັງພາກປະຕິບັດຕົວຈິງ</u> :

- ຜູ້ສອບເສັງລົດໂດຍສານປະເພດສາມລໍ້ຕິດເຄື່ອງຈັກ ແມ່ນຍົກເວັ້ນການສອບເສັງພາກປະຕິບັດຕົວຈິງ ໃນເງື່ອນໄຂທີ່ ຜູ້ກ່ຽວມີໃບຂັບຂີ່ປະເພດ A1 ຜ່ານມາແລ້ວຢ່າງໜ້ອຍ 1 ປີ , ແຕ່ຕ້ອງໄດ້ຜ່ານການຝຶກອົບຮົມຄືນພາກທິດສະດີ ຕາມຫລັກສູດການຝຶກອົບຮົມຂອງກະຊວງ ຄຂປກ ວາງອອກ ແລະ ຜ່ານການທົດສອບຄືນຄວາມຮູ້ກ່ຽວກັບກົດລະບຽບການຈະລາຈອນ.

- ສຳລັບຜູ້ທີ່ມີໃບຂັບຂີ່ປະເພດ A1 ຊຶ່ງໄດ້ຜ່ານການຝຶກອົບຮົມ ແລະ ມີໃບຢັ້ງຢືນການສອບເສັງຈົບຫລັກສູດການຝຶກອົບຮົມຈາກໂຮງຮຽນສອນຂັບລົດໃດໜຶ່ງຢ່າງຖືກຕ້ອງຕາມລະບຽບການແລ້ວ ແມ່ນມີສິດຂໍເອົາໃບຂັບຂີ່ປະເພດ D1 ໄດ້ໂດຍບໍ່ຈຳເປັນຕ້ອງເຂົ້າຮັບການຝຶກອົບຮົມຕື່ມ ແຕ່ຜູ້ກ່ຽວຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການໃຫ້ຄົບຖ້ວນ ຕາມອັດຕາທີ່ໄດ້ກຳນົດໄວ້ ສຳລັບການສອບເສັງໃບຂັບຂີ່ປະເພດ D.

ຫົວໜ້າກົມຂົນສົ່ງ

ລັດຕະນະມະໜີ ຄູນນີວົງ